# ກອງປະຊຸມຂະແໜງການແກ້ໄຂບັນຫາ ລບຕ ຄັ້ງທີ 2 ປະຈຳປີ 2024

ຄັ້ງວັນທີ 1 ພະຈິກ 2024 ທີ່ ໂຮງແຮມ ສຸພັດຕຣາ, ນະຄອນຫຼວງວຽງຈັນ

# ຫົວຂໍ້ການນຳສະເໜີ:

ການຈັດຕັ້ງປະຕິບັດບັນດາ ກິດຈະກຳຕັ້ງແຕ່ເດືອນ ມິຖຸນາ ເຖິງ ຕຸລາ 2024

ຕົວເລກການຈັດຕັ້ງປະຕິບັດ ວຽກງານແກ້ໄຂບັນຫາ ລບຕ ນັບແຕ່ເດືອນມັງກອນ ເຖິງ ຕຸລາ 2024

ບັນດາສິ່ງທ້າທາຍໃນ ການຈັດຕັ້ງປະຕິບັດວຽກ ງານແກ້ໄຂບັນຫາ ລບຕ.

ແຜນບູລິມະສິດໃນປີ 2025

## 1. ການຈັດຕັ້ງປະຕິບັດບັນດາກິດຈະກຳຕັ້ງແຕ່ເດືອນ ມິຖຸນາ ເຖິງ ຕຸລາ 2024

- ຈັດກອງປະຊຸມປັບປຸງມາດຕະຖານແຫ່ງຊາດ ແລະ ຄາດຄະເນຈະສຳເລັດໃນທ້າຍປີ 2024
- ຈັດກອງປະຊຸມປຶກສາຫາລືກ່ຽວກັບ ລະບົບການຈັດບູລິມະສິດວຽກງານກວດກູ້ ໃນຂະແໜງການ ລບຕ. ປະຈຸບັນ ຢູ່ໃນຂັ້ນຕອນການແປຈາກພາສາລາວ ເປັນພາສາອັງກິດ ແລ້ວ ຈຶ່ງນຳສະເໜີກະຊວງການຕ່າງປະເທດເພື່ອຮັບຮອງ.
- ຈັດຝຶກອົບຮົມການພັດທະນາມາດຕະຖານແຫ່ງຊາດ ຮ່ວມກັບອົງການ GICHD.
- ຈັດກອງປະຊຸມຜ່ານເນື້ອໃນດຳລັດ 210/ນຍ ວ່າດ້ວຍການແກ້ໄຂບັນຫາ ລບຕ ຢູ່ໃນ ສປປ ລາວ.
- ໄດ້ຈັດກອງປະຊຸມ ວຽກງານບົດບາດຍິງ-ຊາຍ ເພື່ອກະກຽມການຮັບຮອງແຜນປະຕິບັດງານໃນປີ 2025-2026
- ຈັດຝຶກອົບຮົມການນຳໃຊ້ຖານຂໍ້ມູນເຂົ້າໃນວຽກງານແກ້ໄຂບັນຫາ ລບຕ ໃຫ້ພະນັກງານຂັ້ນແຂວງ ແລະ ເມືອງ ຂອງໄຊສົມບູນ ແລະ ບໍລິຄຳໄຊ.







- ເຂົ້າຮ່ວມກອງປະຊຸມສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ຄັ້ງທີ 12 ຢູ່ ເຈັນນີວາ, ສະວິດເຊີແລນ.
- ຈັດພິທີສະຫຼອງ ວັນມີຜົນບັງຄັບໃຊ້ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານຄົບຮອບ 14 ປີ.
- ຈັດງານວາງສະແດງວຽກງານ ລບຕ ຢູ່ ສູນຝຶກອົບຮົມວຽກງານແກ້ໄຂບັນຫາ ລບຕ ແຫ່ງຊາດ.
- ສືບຕໍ່ຝຶກອົບຮົມວິຊາການທຳລາຍ ລບຕ ຂັ້ນ 4
- ສຳເລັດການສຳພາດຮັບເອົາຫົວໜ້າຫ້ອງການ ຄຊກລ ຜູ້ໃຫມ່.
- ຈັດກອງປະຊຸມວິຊາການວຽກງານການສຳຫຼວດ-ກວດກູ້, ການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ, ການຄຸ້ມຄອງຂໍ້ມູນຂ່າວ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ.








2. ຕົວເລກການຈັດຕັ້ງປະຕິບັດວຽກງານໃນຂະແໜງການແກ້ໄຂ ບັນຫາ ລບຕ ນັບແຕ່ ເດືອນ ມັງກອນ ເຖິງ ຕຸລາ 2024

# ຕົວເລກການຈັດຕັ້ງປະຕິບັດວຽກງານແກ້ໄຂບັນຫາ ລບຕ ນັບແຕ່ເດືອນ ມັງກອນ ເຖິງ ຕຸລາ 2024 ເມື່ອທຽບໃສ່ແຜນພັດທະນາເສດຖະກິດສັງຄົມຄັ້ງທີ 9 ແລະ ແຜນຍຸດທະສາດ ເສັ້ນທາງສູ່ຄວາມປອດໄພ III




Source: NRA IMSMA Database as of 30.10.2024

## 1. ວຽກງານໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ



ການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ

ຈຳນວນວຽກງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ມີ 3,292 ຄັ້ງໃນ 970 ບ້ານ. ຜູ້ໄດ້ຮັບຜົນຜະໂຫຍດ 334,635 ຄົນ ເປັນຍິງ 170,111 ຄົນ.

Source: NRA IMSMA Database as of 30.10.2024

## 2. ການລາຍງານອຸປະຕິເຫດທີ່ເກີດຂຶ້ນໃນ 9 ເດືອນທີ່ຜ່ານມາ



ອຸປະຕິເຫດຈາກ ລບຕ

ມີອຸບັດຕິເຫດຈາກ ລບຕ ເກີດຂຶ້ນທັງໝົດ 25 ຄັ້ງ ມີຜູ້ຖືກເຄາະຮ້າຍທັງໝົດ 48 ຄົນ ມີຜູ້ບາດເຈັບ 39 ຄົນ ແລະ ເສຍຊີວິດ 9 ຄົນ, ໃນນັ້ນມີເດັກນ້ອຍບາດເຈັບ 20 ຄົນ ເດັກຍິງ 5 ຄົນ ແລະ ເດັກຊາຍເສຍຊີວິດ 5 ຄົນ ແລະ ເດັກຍິງ 1 ຄົນ. ຈຳນວນເດັກນ້ອຍມີທັງໝົດ 62,5 ເປີເຊັນ

ສາເຫດການເກີດອຸປະຕິເຫດ:

1. ດັງໄຟ 3 ຄັ້ງ/8 ຄົນ = 15%
2. ຫລິ້ນກັບລະເບີດ 7 ຄັ້ງ/23 ຄົນ = 35%
3. ຂຸດດິນ 6 ຄັ້ງ/8 ຄົນ = 30%
4. ມ້າງ 2 ຄັ້ງ = 10%
5. ຖາງປ່າ 2 ຄັ້ງ = 10%

Source: NRA IMSMA Database as of 30.10.2024

## 3. ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ



ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ

ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍທັງໝົດມີ 1939 ຄົນ ເປັນຍິງ 353 ຄົນ.

ໃນນີ້ອົງການ WE ຊ່ວຍເຫຼືອດ້ານການປິ່ນປົວ 26 ຄົນ ແລະ ສຸຂະພາບຈິດ 61 ຄົນ. ອົງການ COPE ແລະ QLA ຊ່ວຍເຫຼືອດ້ານຝຶກອົບຮົມວິຊາຊີບ ແລະ ຊ່ວຍເຫຼືອສົ່ງເສີມເສດຖະກິດ 625 ຄົນ, ຊ່ວຍເຫຼືອຟື້ນຟູດ້ານໜ້າທີການ 320 ຄົນ ແລະ ໂສະນາສິດທິຄົນພິການໄດ້ 907 ຄົນ.

Source: NRA IMSMA Database as of 30.10.2024

## 4. ການສໍາຫຼວດແບບບໍ່ແມ່ນວິຊາການ



ການສໍາຫຼວດແບບບໍ່ແມ່ນວິຊາການ

ການສໍາຫຼວດແບບບໍ່ແມ່ນວິຊາການທັງໝົດ 211 ຄັ້ງ ໃນ 211 ບ້ານ. ມີຜູ້ໄດ້ຮັບຜົນປະໂຫຍດຈາກກິດຈະກໍາດັ່ງກ່າວມີ 28,507 ຄົນ.

Source: NRA IMSMA Database as of 30.10.2024

## 5. ການສຳຫຼວດແບບວິຊາການໃນ 6 ເດືອນ ຕົ້ນປີ ທີ່ຜ່ານມາ



ການສຳຫຼວດແບບວິຊາການ

ການສຳຫຼວດແບບວິຊາການທັງໝົດ 314 ບ້ານ. ເນື້ອທີ່ສຳຫຼວດແບບວິຊາການ 24,948 ຮຕ ແລະ ສາມາດກຳນົດພື້ນທີ່ອັນຕະລາຍມີ 19,820 ຮຕ. ທຳລາຍລະເບີດໄດ້ 9,062 ໜ່ວຍ (ລະເບີດໂບມໃຫຍ່ 3 ໜ່ວຍ, ລະເບີດລູກຫວ່ານ  8,032 ໜ່ວຍ, ລະເບີດຝັງດິນ (ມິນ) 1 ໜ່ວຍ ແລະ ສຳພາວຸດອື່ນໆ 1,151 ສິ້ນສ່ວນ.

Source: NRA IMSMA Database as of 30.10.2024

**6. ວຽກງານກວດກູ້ພື້ນທີ່ທີ່ມີ ລບຕ**



ການກວດກູ້

ກວດກູ້ເນື້ອທີ່ໄດ້ 5,276 ຮຕ. ທຳລາຍ ລະເບີດໄດ້ 71,875 ໜ່ວຍ,(ລະເບີດໂບມໃຫຍ່ 67 ໜ່ວຍ, ລະເບີດລູກຫວ່ານ 53,026 ໜ່ວຍ , ລະເບີດຝັງດິນ(ມີນ) 45 ໜ່ວຍ ແລະ ສຳພາ ວຸດອື່ນໆ 18,737 ສິ້ນສ່ວນ).

## ຕົວເລກການກວດກູ້ ລບຕ ຂອງອົງການກວດກູ້ ເພື່ອມະນຸດສະທຳ ພາຍໃນ ແລະ ຕ່າງປະເທດ

- ຄກລ: 1,708 ຮຕ, ທຳລາຍ ລບຕ ໄດ້ 28,208 ໜ່ວຍ
- ຮາໂລຫຼາສ: 1,213 ຮຕ, ທຳລາຍ ລບຕ ໄດ້ 18,564 ໜ່ວຍ
- ແມັກ: 1079 ຮຕ, ທຳລາຍ ລບຕ ໄດ້ 11,096 ໜ່ວຍ
- ເອັນພີເອ: 854 ຮຕ, ທຳລາຍ ລບຕ ໄດ້ 11,880 ໜ່ວຍ
- ກອງ 58: 91 ຮຕ, ທຳລາຍ ລບຕ ໄດ້ 1,073 ໜ່ວຍ
- ເຫັດສໄອ: 13 ຮຕ, ທຳລາຍ ລບຕ ໄດ້ 405 ໜ່ວຍ

## ຕົວເລກການກວດກູ້ຂອງອົງການກວດກູ້ພາກວິສາຫະກິດ

- ບໍລິສັດ ລ້ານຊ້າງ ມີເນີໂຣ ກວດກູ້ໄດ້ 245 ຮຕ, ທຳລາຍ ລບຕ 609 ໜ່ວຍ
- ບໍລິສັດ ມິວເຊີດ ກວດກູ້ໄດ້ 68 ຮຕ, ທຳລາຍ ລບຕ 40 ໜ່ວຍ

Source: NRA IMSMA Database as of 30.10.202

# 3. ງົບປະມານ

ງົບປະມານຂອງຂະແໜງການແກ້ໄຂບັນຫາ ລບຕ ໂດຍອີງຕາມ MOU
ແລະ ການຮ່ວມມື 2 ຝ່າຍ ມີທັງໝົດ **$53,531,832**

# 4. ບັນດາສິ່ງທ້າທາຍ

- ຂອດການປະສານງານລະຫວ່າງ ແຂວງ ແລະ ອົງການປະຕິບັດງານແກ້ໄຂບັນຫາ ລບຕ ຍັງບໍ່ມີຄວາມກົມກຽວ. ຫ້ອງການ ຄຊກລ ເຫັນວ່າເປັນບັນຫາສຳຄັນທີ່ຕ້ອງຮີບແກ້ໄຂດ່ວນ.
- ແຜນການກວດກູ້, ໂຄສະນາສຶກສາຄວາມສ່ຽງ, ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຍັງບໍ່ສາມາດສັງລວມໄດ້ ຂອງຂະແໜງການແກ້ໄຂບັນຫາ ລບຕ.
- ວຽກງານການກວດກູ້ ລບຕ ບໍ່ສາມາດຕອບສະໜອງການກວດກູ້ ທີ່ບໍ່ແມ່ນ CHAs ແລະ ບັນດາໂຄງການພັດທະນາພື້ນຖານໂຄງລ່າງ ທີ່ບໍ່ໄດ້ຂຶ້ນງົບປະມານການກວດກູ້ເຂົ້າ.
- ວຽກງານການໂຄສະນາສຶກສາຄວາມສ່ຽງໄພ ຍັງບໍ່ທັນໄດ້ໂຄສະນາທົ່ວເຖິງ ເນື່ອງຈາກວ່າ ຍັງມີກຸ່ມສ່ຽງທີ່ໄດ້ຮັບການໂຄສະນາ ແຕ່ຍັງບໍ່ປ່ຽນແປງພຶດຕິກຳ ແລະ ບາງບຸກຄົນທີ່ຍົກຍ້າຍຈາກຖິ່ນຖານບ່ອນອື່ນ ທີ່ບໍ່ມີຜົນກະທົບມາດຳລົງຊີວິດຢູ່ໃນພື້ນທີ່ທີ່ມີ ລບຕ.
- ວຽກງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຍັງບໍ່ສາມາດຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການໃນການຟື້ນຟູໜ້າທີການ, ການຝຶກອົບຮົມວິຊາຊີບ ແລະ ການສະໜອງການຊ່ວຍເຫຼືອດ້ານເສດຖະກິດ.
- ງົບປະມານໃນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ, ການໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ແລະ ການ ສຳຫຼວດ-ກວດກູ້ ຍັງບໍ່ສາມາດຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການ.

# 5. ແຜນບູລິມະສິດໃນປີ 2025

- ໂຄສະນາຜ່ານວິທະຍຸ 10 ແຂວງ, ໂທລະໂຄ່ງບ້ານຈຳນວນ 18 ແຂວງ, ໂທລະໂຄ່ງໂຮງຮຽນໃນທົ່ວປະເທດ, ໂທລະພາບ ພ້ອມທັງສື່ທາງອອນໄລຂອງຊາວໜຸ່ມ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວຂັ້ນສູນກາງ ແລະ ຂັ້ນແຂວງ.
- ສືບຕໍ່ໂຄສະນາສຶກສາຄວາມສ່ຽງຜ່ານອົງການປະຕິບັດງານ ແລະ ອາສາສະໝັກບ້ານ ໂດຍຜ່ານຊາວໜຸ່ມ ແລະ ກົມການສຶກສານອກລະບົບໂຮງຮຽນ ທີ່ປະຕິບັດວຽກງານດັ່ງກ່າວຢູ່ບັນດາແຂວງ ແລະ ເມືອງ ໂດຍສຸມໃສ່ກຸ່ມທີ່ມີຄວາມສ່ຽງ ທີ່ເກີດອຸປະຕິເຫດຈາກ ລບຕ.
- ສືບຕໍ່ປັບປຸງສື່ໂຄສະນາໃຫ້ສອດຄ່ອງກັບກຸ່ມເປົ້າໝາຍ ເປັນຕົ້ນແມ່ນ ກຸ່ມເດັກນ້ອຍ, ກຸ່ມຜູ້ໃຫຍ່ ແລະ ໃຫ້ມີຫຼາກຫຼາຍພາສາເຜົ່າ.
- ຂະຫຍາຍຕາໜ່າງການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຢູ່ ແຂວງ ສະຫວັນນະເຂດ, ຄຳມ່ວນ, ສາລະວັນ, ຊຽງຂວາງ ແລະ ຫົວພັນ ຖ້າມີງົບປະມານ.
- ເຜີຍແຜ່ດຳລັດສະບັບປັບປຸງ ເລກທີ 210/ລບ, ມາດຕະຖານແຫ່ງຊາດ ແລະ ແຜນບູລິມະສິດ ຂອງຂະແໜງການແກ້ໄຂບັນຫາ ລບຕ.
- ປັບປຸງຖານຂໍ້ມູນ, ຂອດການປະສານງານ ແລະ ສ້າງຄວາມອາສາມາດ ຂອງວຽກງານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ, ອຸປະຕິເຫດ, ການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ, ການສຳຫຼວດ-ກວດກູ້ ແລະ ກວດກາຄຸນະພາບ ໃຫ້ແກ່ຂັ້ນແຂວງ ແລະ ເມືອງ.

- ຈັດກອງຜູ້ບໍລິຫານອີງການ ແລະ ກອງປະຊຸມກຸ່ມວິຊາການວຽກງານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ, ການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ, ການສຳຫຼວດ-ກວດກູ້, ການຄຸ້ມຄອງຂໍ້ມູນ ແລະ ການຄຸ້ມຄອງຄຸນນະພາບ.
- ກະກຽມຄວາມພ້ອມການເປັນປະທານການທົບທວນຄັ້ງທີ 3 ຂອງ ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ.
- ສືບຕໍ່ປັບປຸງຂະບວນການການສືບຕໍ່ MOU ໃຫ້ມີຄວາມວ່ອງໄວ ແລະ ມີປະສິດທິພາບຫຼາຍຂຶ້ນກວ່າເກົ່າ.
- ສຶກສາຄົ້ນຄວ້າກ່ຽວກັບນະວັດຕະກຳໃໝ່ໆ ເພື່ອສະໜັບສະໜູນໃຫ້ແກ່ການສຳຫຼວດ-ກວດກູ້ ແລະ ທຳລາຍ ໂດຍຜ່ານໂຄງການທົດລອງການນຳໃຊ້ ໂດຣນ, ການນຳໃຊ້ໝາໃນການສຳຫຼວດ ແລະ ກວດກູ້ ແລະ ການສຶກສາພື້ນທີ່ທີ່ມີຜົນກະທົບສູງ ແລະ ມີຄວາມໜາແໜ້ນ ຈາກລະເບີດລູກຫວ່ານ.
- ສືບຕໍ່ການຝຶກອົບຮົມນັກວິຊາການ ເກັບກູ້ລະເບີດຂັ້ນ 4 ແລະ ຫຼັກສູດທົບທວນວິຊາການຂັ້ນ 4.
- ສືບຕໍ່ການຕອບສະໜອງການທຳລາຍສຸກເສີນ ແລະ ສະໜອງງົບປະມານ ເພື່ອທົດແທນການເປ່ເພເສຍຫາຍໃຫ້ແກ່ປະຊາຊົນ ເປັນຕົ້ນ: ກໍລະນີທຳລາຍໂບມໃຫຍ່ທີ່ບໍ່ສາມາດເຄື່ອນຍ້າຍໄດ້.
- ສືບຕໍ່ພັດທະນາລະບົບການຄຸ້ມຄອງຂໍ້ມູນຂ່າວສານ ໂດຍນຳໃຊ້ IMSMA Core, ຫໍສະໝຸດດີຈິຕອນ ແລະ ລະບົບແລກປ່ຽນຂໍ້ມູນແບບອີເລັກໂຕນິກຢູ່ພາຍໃນຫ້ອງການ ຄຊກລ.

# ຂໍຂອບໃຈ